ຈຳປາເມືອງລາວ

# MUANGLAO

ARY 2017 VOL.3 ISSUE 22

OFFICIAL LAO AIRLINES
INFLIGHT MAGAZINE



LAOS ASEAN Chairmanship 2016

ການບິນລາວ
Lao Airlines

FREE COPY




COVER PAGE: Pha Tad Ke Botanical Garden, Luang Prabang. Photo Credit: Paul Wager.

# JANUARY 2017

ISSUE 22 VOLUME 3

# CONTENT

ການບິນລາວ
Lao Airlines

Page 18
Pha Tad Ke - The First Botanical Garden in Laos

Page 26
Borobudur - The World Heritage Sites

Page 30
Indonesian Batik - The Art of Textile

Page 34
Events Calendar

Page 38
Yogyakarta - The Gateway to Central Java

Page 44
Editor's Choice in Yogyakarta

Page 56
Essential - Lemongrass

Page 58
Local Flair - Grilled Chicken

Page 60
Stunning Vang Vieng

Page 62
Packages

Page 72
Flight Time Tables



# ຜາຕັດແກ້

## ສວນພຶກສາຊາດແຫ່ງທຳອິດໃນລາວ

ສວນພຶກສາຊາດ ຜາຕັດແກ້ ໄດ້ເປີດຕົວໃຫ້ມວນຊົນເຂົ້າຊົມໄດ້ ນັບຕັ້ງແຕ່ເດືອນພະຈິກ 2016 ເປັນຕົ້ນມາ. ກໍ່ຕັ້ງຂຶ້ນໂດຍ ຣິກ ກາເດນລ້າ, ຜາຕັດແກ້ ຕັ້ງຢູ່ທີ່ຫລວງພະບາງ ແລະ ເປັນສວນພຶກສາຊາດແຫ່ງທຳອິດຂອງປະເທດລາວ ໂດຍໃຊ້ເວລາກໍ່ຕັ້ງ ແລະ ພັດທະນາ ມາເປັນເວລາ 7 ປີ ເພື່ອການເພາະພັນ ແລະ ສຶກສາຄວາມຫລາກຫລາຍຂອງບັນດາພືດພັນ ນາໆຊະນິດຂອງລາວ ແລະ ການພັດທະນາ ຝຶກອົບຮົມໃຫ້ແກ່ພະນັກງານ ເຈົ້າໜ້າທີ່ ທີ່ປະຕິບັດງານຂອງສວນແຫ່ງນີ້ໂດຍເນັ້ນໃສ່ການສຶກສາດ້ານເຜົ່າພັນຂອງພືດພັນ.

ທີ່ສວນແຫ່ງນີ້ ມີການສະແດງໃຫ້ເຫັນເຖິງບັນດາພຶກສາຊາດຕ່າງໆຂອງລາວ ບໍ່ວ່າຈະເປັນ ຕົ້ນຂີງ ຕົ້ນຂ່າ, ດອກກ້ວຍໄມ້, ຜັກກູດ, ໄມ້ໄຜ່ ແລະ ຕົ້ນຫມາກ ຕົ້ນປາມ ທີ່ຖືກປູກ ແລະ ຈັດວາງຢູ່ອ້ອມຮອບຂອງຜາຕັດແກ້ ເຊິ່ງເປັນໜ້າຜາສູງຊັນ ຕັ້ງຢູ່ເຊີງແມ່ນ້ຳຂອງ. ສວນແຫ່ງນີ້ ມີຄວາມງົດງາມເປັນຢ່າງຍິ່ງ ແລະ ພຽງແຕ່ຕ້ອງນັ່ງເຮືອພຽງ 15 ນາທີ ຈາກຫ້ອງຕ້ອນຮັບຂອງໂຄງການແຫ່ງນີ້ ທີ່ຢູ່ກາງຕົວເມືອງຂອງຫລວງພະບາງ.

ຈຸດໃຈກາງຂອງສວນຜາຕັດແກ້ ແມ່ນບັນດາສວນພຶກສາບັນດາເຜົ່າ ທີ່ສະແດງໃຫ້ເຫັນ ເຖິງຄວາມສຳພັນລະຫວ່າງຊົນເຜົ່າຕ່າງໆຂອງລາວ ກັບບັນດາພືດພັນຕ່າງໆໃນຊີວິດ ປະຈຳວັນຂອງພວກເຂົາເຈົ້າ ບໍ່ວ່າຈະເປັນການນຳໃຊ້ເປັນຢາ, ອາຫານ, ຫັດຖະກຳ, ພິທີກຳດ້ານສາດສະໜາ ຈົນໄປເຖິງການສະກັດເປັນຢາເພື່ອປິ່ນປົວຊ້າງ. ກຸ່ມພຶກສາຕ່າງໆເຫລົ່ານີ້ ມີຈຳນວນຫລາກຫລາຍ ແລະ ຍັງບໍ່ທັນໄດ້ຮັບການຄົ້ນຄວ້າ ສຶກສາເທົ່າທີ່ຄວນ. ເຖິງແມ່ນວ່າ ຄວາມຮູ້ພື້ນບ້ານ ກ່ຽວກັບການນຳໃຊ້ພືດພັນຕ່າງໆ ຂອງບັນດາຊົນເຜົ່າຂອງລາວ ໄດ້ຮັບການສືບທອດຕໍ່ກັນມາຫລາຍຍຸກຫລາຍສະໄໝ ຜ່ານການເລົ່າປາກຕໍ່ປາກ, ແຕ່ການສຶກສາຄົ້ນຄວ້າ ເພື່ອໃຫ້ມີຄວາມຮູ້ຄວາມເຂົ້າໃຈ ຢ່າງເລິກເຊິ່ງ ຖືກວ່າເປັນວຽກງານທີ່ສຳຄັນ.

ສວນຜາຕັດແກ້ ເປັນສ່ວນນຶ່ງໃນການສ້າງມາດຕະຖານໃຫ້ການທ່ອງທ່ຽວ ທີ່ຍືນຍົງຄົງຕົວ ແລະ ມີຄວາມຮັບຜິດຊອບດ້ານສະພາບແວດລ້ອມ, ສົ່ງເສີມຄົງຄືນສູ່ຊຸມຊົນ, ຮັກສາ ວັດທະນະທຳທ້ອງຖິ່ນ ແລະ ສະພາບແວດລ້ອມ. ສວນຜາຕັດແກ້ ໄດ້ສ້າງວິຊາອາຊີບ ແລະ ວຽກເຮັດງານທຳໃຫ້ແກ່ຊາວບ້ານທ້ອງຖິ່ນ ພ້ອມທັງສ້າງຊັບພະຍາກອນບຸກຄົນ ໃຫ້ມີຄວາມຮູ້ດ້ານພຶດຊະວິທະຍາ ແລະ ດ້ານວຽກງານການບໍລິການ.

ທີ່ສວນຜາຕັດແກ້ ຍັງມີຮ້ານອາຫານ ທີ່ຕັ້ງຢູ່ຂ້າງບຶງດອກບົວທີ່ງົດງາມ ແລະ ມີການຈັດວາງ ແລະ ຕົບແຕ່ງແບບສະບາຍສະບາຍ ແທດເໝາະແກ່ການນັ່ງພັກຜ່ອນອ່ານໜັງສື ແລະ ດື່ມຊາສະຫມຸນໄພ. ໂດຍການຮ່ວມມື ກັບພໍ່ຄົວຊື່ດັງຄົນລາວ, ແສງ ຫລວງລາດ ຈາກຮ້ານອາຫານ ຕົບເຂົ້າ ທີ່ເປັນຮ້ານອາຫານລາວທີ່ມີຊື່ສຽງໃນວົງຊັ້ນດີຊີ ແລະ ທີມງານຂອງລາວ, ຮ້ານອາຫານຂອງສວນຜາຕັດແກ້ ໄດ້ພັດທະນາລາຍການອາຫານທ້ອງຖິ່ນ ຂອງລາວ ໃຫ້ເປັນຮູບແບບທັນສະໄໝ ໂດຍຍັງຄົງຮັກສາລົດຊາດອັນດັ້ງເດີມ. ນອກຈາກນັ້ນ ທີ່ສວນຜາຕັດແກ້ ຍັງມີຮ້ານຂາຍເຄື່ອງຫັດຖະກຳ, ອາຫານ, ຊາສະຫມຸນໄພ ແລະ ຜະລິດຕະພັນເຄື່ອງສຳອາງ ທີ່ຜະລິດຈາກພືດພັນທ້ອງຖິ່ນ.

ຜາຕັດແກ້ ໄດ້ມີການຮ່ວມມື ແລກປ່ຽນຄວາມຮູ້ ແລະ ຄວາມຊ່ວຍເຫລືອ ກັບບັນດາ ສວນພຶກສາຊາດລະດັບສາກົນຕ່າງໆ ເປັນຕົ້ນແມ່ນ ສວນພຶກສາຊາດສິຣິກິດ ທີ່ຊຽງໃໝ່, ສວນພຶກສາຊາດສິງກາໂປ ແລະ ສວນພຶກສາຊາດແຫ່ງເອດິນເບີກ ໃນວຽກງານການສຶກສາຄົ້ນຄວ້າຕ່າງໆ.

ການເປີດຕົວຂອງສວນຜາຕັດແກ້ຂັ້ນທຳອິດ ສູ່ມວນຊົນໃນເດືອນພະຈິກທີ່ຜ່ານມາ ໄດ້ເຮັດໃຫ້ມວນຊົນມີໂອກາດຮຽນຮູ້ ແລະ ທຳຄວາມເຂົ້າໃຈກັບຄວາມສຳຄັນ ແລະ ຄວາມຫລາກຫລາຍຂອງບັນດາພືດພັນຕ່າງໆຂອງລາວ.

ສົນໃຈສອບຖາມລາຍລະອຽດເພີ່ມເຕີມ ກະລຸນາຕິດຕໍ່ ສຳນັກງານ ແລະ ຫ້ອງຕ້ອນຮັບ ຂອງຜາຕັດແກ້, ບ້ານວັດທາດ, ເມືອງຫລວງພະບາງ.

ໂທ: +856 71 261000, +856 30 2866000
bookings@pha-tad-ke.com
www.pha-tad-ke.com



Photo Credit: Paul Wager



# PHA TAD KE

## The First Botanical Garden in Laos

Photo Credit: Paul Wager

Pha Tad Ke Botanical Garden was open to the public on November 1st 2016. Founded by curator and publisher, Rik Gadella, Pha Tad Ke is located in Luang Prabang and is the first garden of its kind in Laos. It has taken seven years of developing botanical collections, scientific research, landscaping, and employee capacity building to create this unique botanical garden with a deep focus on ethno-botany.





Showing the Flora of Laos, a verdant oasis of gingers, orchids, ferns, bamboos, and palms is clustered around the base of the stunning rocky Pha Tad Ke cliff looming over the Mekong River. So peaceful that it could be deep in the wilds of Lao, it is only 15 minutes on the Pha Tad Ke boat from the downtown reception in World-heritage listed Luang Prabang, with its picturesque temples and colourful markets.

The centrepiece of Pha Tad Ke is a series of ethno-botanic gardens. Focusing on the relationship between Lao people and their plants, these gardens showcase plants used in medicine, handicraft, spiritual ceremonies as well as medicinal plants for elephants. The potential of this collection, much of which is yet unstudied, is immense. Although the traditional knowledge of the ethnic minorities about the plants in rural Laos is extensive, it is passed down orally, making it vulnerable to the pressures of development and very much in need of conservation and further in-depth study.

Pha Tad Ke is setting new standards in sustainable and environmentally responsible tourism, giving back to Lao communities, preserving local culture and the environment. The garden provides jobs to local villagers and creates a nurturing platform for young talent to develop new skills from gardening to science, education and hospitality. Publications and manuals in Lao language have been written by the staff and provide learning opportunities for Lao communities through workshops and student trainings.

The Pha Tad Ke café overlooks lush lotus ponds and features lounging couches, poetry books, and delectable teas. In collaboration with Lao chef, Seng Luangrath from Thip Khao restaurant in Washington DC the team has developed a menu that pushes the limits of traditional Lao food to full flavour capacity and visual appeal with seasonally changing, creative and healthy Asian dishes. The shop presents locally sourced handicrafts, as well as Lao food products, herbal teas and beauty products. In collaboration with international botanical partner gardens such as the Queen Sirikit Botanic Garden in Chiang Mai, the Singapore Botanic Garden and the Royal Botanic Garden Edinburgh, solid inroads into research, education and conservation programs have been made. With the opening to the public of the first phase of the gardens in November, Pha Tad Ke offered the public a great opportunity to learn more about the vital importance of biodiversity and ecological conservation in Laos.

For more information please contact: RECEPTION / OFFICE, Ban Wat That, Luang Prabang. Tel: +856 71 261000, + 856 30 2866000. E-mail: bookings@pha-tad-ke.com www.pha-tad-ke.com